# ໂອກາດ ການຜະລິດງົວເພື່ອສົ່ງອອກ ຂອງ ສປປ ລາວ ໄປຍັງ ສປ.ຈີນ

ໂດຍ: **ປອ. ພັນທະວົງ ວົງສຳພັນ**

ຮອງຫົວໜ້າກົມລ້ຽງສັດ ແລະ ການປະມົງ

**ໃນລາຍການ LFN Live (EP 9)**

**19 ພະຈິກ 2021**

# I. ຍ້ອນຫຍັງຈຶ່ງເກີດມີ ໂຄງການຜະລິດງົວເພື່ອສົ່ງອອກຂອງ ສປປ ລາວໄປຍັງ ສປ.ຈີນ



# ໃນທົ່ວໂລກມີງົວທັງໝົດ 1 ຕື້ ກັບ 2 ລ້ານກວ່າໂຕ
# ໃນນີ້ ສປຈີນ ມີ 97 ລ້ານກວ່າໂຕ ເປັນອັນດັບທີ່ 3 ຂອງໂລກ



# ໃນທົ່ວໂລກ ບໍລິໂພກງົວທັງໝົດເກືອບ 61 ລ້ານໂຕນ




*ໃນນີ້ ສປຈີນ ເປັນອັນດັບທີ່ 2 ຂອງໂລກ ບໍລິໂພກປະມານ 8,4 ລ້ານກວ່າໂຕນ ແລະ ພາຍໃນຈີນ ເອງສະໜອງ ໄດ້ 7 ລ້ານກວ່າໂຕນ ທີ່ເຫລືອ ແມ່ນ ນຳເຂົ້າ ຈາກ 5 ປະເທດຕົ້ນຕໍ ແລະ* ***ໃນອານາຄົດ ສປ.ຈີນ ຈະເປັນ ປະເທດທີ່ນຳເຂົ້າ ງົວທີ່ຫລາຍທີ່ສຸດໃນໂລກ***

# GMS国家牛流动路径
## Movement of Cattle, buffalos and pigs from GMS countries to China
(2010-2018)




ເສັ້ນທາງ ງົວຈາກ ໄທຜ່ານ ສປປ ລາວ ໃນເຂດພາກເໜືອ ປີ ລະປະມານ 120,000 ໂຕ

ຈີນນຳເຂົ້າງົວມີຊີວິດ ປີ ລະປະມານ 1 ລ້ານໂຕ ໃນນັ້ນມາຈາກ ອິນເດັຍ 45%, ມຽນມາ 40%, ປາກິສຖານ 10% ທີ່ ເຫຼືອ 5% ແມ່ນມາຈາກ ລາວ, ໄທ, ອິນໂດເນ ເຊັຍ ແລະ ອື່ນໆ

Cattle and Buffalo → Pig → Fattened cattle from non GMS countries by sea

# ການຂົນສົ່ງງົວ ຂ້າມນ້ຳຈາກຊຽງລາຍ ຂຶ້ນລົດແຂວງບໍ່ແກ້ວ ເພື່ອຫາບໍ່ເຕັນ



















ບໍ່ເປັນທາງການ, ບໍ່ໄດ້ຜ່ານການກວດການດ້ານ SPS ທີ່ຖືກຕ້ອງ, ມີຄວາມສ່ຽງສູງ





# ໂຄງການຕົວແບບສ້າງເຂດທອມສັດ, ເຂດກັນຊົນ ແລະ ເຂດປອດພະຍາດປາກເປື່ອຍລີ້ງເລັບ ເພື່ອການສົ່ງອອກງົວ ຈາກ ສປປ ລາວໄປ ສປ ຈີນ




1. ກວດກາຢູ່ເຂດທ້ອນໂຮມສັດ
2. ເຂດກັນຊົນ
3. ກວດກາຢູ່ສະຖານທີ່ກັກກັນສັດ

1. ກວດກາຢູ່ດ້ານ
2. ກວດກາຢູ່ສະຖານທີ່ກັກກັນສັດ
3. ກວດກາຢູ່ໂຮງງານຂ້າສັດ

## ❑ ສັງລວມຫຍໍ້ ເງື່ອນໄຂການສົ່ງອອກ ງົວຈາກ ສປປ ລາວ ໄປ ສປ ຈີນ ໂດຍຫຍໍ້

- ✓ ງົວຕ້ອງມີນໍ້າໜັກ 350 ກລ ແລະ ອາຍຸບໍ່ເກີນ 4 ປີ
- ✓ ຕ້ອງມາຈາກເຂດປອດ FMD ໃນພື້ນທີ່ 5,6 ກິໂລຕາແມັດ ທີ່ໄດ້ຕາມມາດຕະຖານຂອງ ສປ ຈີນ ເລກທີ SN/T 4999-2017 ແລະ ມາດຕະຖານຂອງ OIE ກໍານົດ
- ✓ ຕ້ອງຖືກລ້ຽງໄວ້ໃນເຂດທ້ອນໂຮມສັດໃຫຍ່ ຢ່າງໜ້ອຍ 45 ວັນ ທີ່ຕັ້ງຢູ່ໃນວົງລັດສະໝີ ລະຫວ່າງ 3-50 ກິໂລແມັດ ອອກຈາກ ເຂດປອດFMD, ຕ້ອງມີການລ້ຽງແຍກເພດ ແລະ ພາຍໃນ 6 ເດືອນ ຕ້ອງບໍ່ກວດພົບເຊື້ອພະຍາດຮ້າຍແຮງຕາມທີ່ ສປ ຈີນກໍານົດ.
- ✓ ສັດລ້ຽງໃນເຂດທ້ອນໂຮມຕ້ອງມີລະບົບການຄຸ້ມຄອງ ຂຶ້ນທະບຽນພິມສັດ, ກວດການຖືພາມານ, ມີການສັກຢາກັນພະຍາດ, ເຝົ້າລະວັງພະຍາດ, ເກັບຕົວຢ່າງ ແລະ ວິໄຈພະຍາດ, ຕິດຕາມການນໍາໃຊ້ອາຫານ-ຢາປິ່ນປົວ, ມີການຄວບຄຸມການເຄື່ອນຍ້າຍ ແລະ ຂົນສົ່ງ ລວມທັງ ມີການນໍາໃຊ້ມາດຕະການດ້ານວິຊາການອື່ນເພື່ອກໍາຈັດ ແລະ ຄວບຄຸມພະຍາດ ທີ່ສອດຄ່ອງກັບມາດຕະການສາກົນ;
- ✓ ກ່ຽວກັບການກັກກັນສັດກ່ອນສົ່ງອອກ ຕ້ອງກັກກັນຢ່າງໜ້ອຍ 30 ວັນ. ສະຖານທີ່ກັກກັນສັດຕ້ອງຢູ່ໃນເຂດປອດ FMD ແລະ ໃຫ້ສອດຄ່ອງກັບ ມາດຕະຖານສະຖານທີ່ການກັກກັນສັດ ຂອງ ສປ ຈີນ ເລກທີ SN/T 4233-2015 ແລະ ຮັບຮອງຈາກສອງອົງການຂອງ ສປປ ລາວ ແລະ ສປ ຈີນ

# ຄວາມຄືບໜ້າ ໃນວຽກງານການສົ່ງອອກງົວ







- **ວັນທີ 30 ເມສາ 2019** ໄດ້ລົງນາມໃນ " ***ອານຸສັນຍາ ວ່າດ້ວຍ ຂໍ້ກຳນົດເງື່ອນໄຂດ້ານສຸຂະນາໄມ ກ່ຽວກັບການກັກກັນ ແລະ ກວດສຸຂະພາບສັດໃຫຍ່ ທີ່ຈະສົ່ງອອກ ຈາກ ສປປ ລາວ ໄປ ສປ.ຈີນ***" ( *ລະຫວ່າງ ກະຊວງກະສິກຳ ແລະ ປ່າໄມ້ ສປປ ລາວ ແລະ ກົມໃຫຍ່ພາສີ ແຫ່ງ ສປ.ຈີນ)*

- **ວັນທີ 20 ມັງກອນ 2021** ສປ.ຈີນ ໄດ້**ຮັບຮອງເອົາເຂດປອດພະຍາດປາກເປື່ອຍລົງເລັບ ຢູ່ເມືອງສິງ ແຂວງຫລວງນ້ຳທາ** ຢ່າງເປັນທາງການ

- **ວັນທີ 28 ເມສາ ຫາ 04 ພຶດສະພາ** ໄດ້ດຳເນີນການ**ສົ່ງອອກຢ່າງເປັນທາງການ** ຈຳນວນ **2.013 ໂຕ**





# II. ສະພາບ ແລະ ເງື່ອນໄຂທ່າແຮງ ການຜະລິດງົວ ຂອງ ສປປ ລາວ





# ສະຖິຕິ ງົວໃນ ສປປ ລາວ ປີ 2020






ມີທັງໝົດ **2,263,100** ໂຕ

- ❑ ເປັນງົວເພດແມ່ 1,42 ລ້ານກວ່າໂຕ
- ❑ ແມ່ຜະລິດລູກ 600,000 ໂຕ
- ❑ ໃຫ້ລູກປີລະ 480,000 ໂຕ
- ❑ ໃຊ້ບໍລິໂພກພາຍໃນ 330,000 ໂຕ
- ❑ ເປັນສິນຄ້າ ປີລະ 80,000 ກວ່າໂຕ
- ❑ ໃຊ້ທົດແທນຂະຫຍາຍຝູງ 70,000 ກວ່າໂຕຕໍ່ປີ

# ສະຖິຕິ ລ້ຽງງົວ ແບບເປັນຟາມ 9 ເດືອນ ປີ 2021






- ຟາມງົວມີທັງໝົດ 487 ຟາມ ມີງົວ 52,083 ໂຕ ຫລື
- ຈຳນວນງົວແມ່ພັນລູກປະສົມ ເກືອບ 20.000 ແມ່
- ຂະຫຍາຍໂຕ 30% ທຽບໃສ່ປີ 2020 ຜ່ານມາ

# ພືດອາຫານສັດ

**ເນື້ອທີ່ທົ່ງຫຍ້າທຳມະຊາດ 654,50 ເຮັກຕາ ແລະ ມີເນື້ອທີ່ປ່າໄມ້ 1.14 ລ້ານ ເຮັກຕາ**




*Source : MAF (2017)*



ຫຍ້າພັນປັບປຸງ ທີ່ນິຍົມປູກຢູ່ໃນບັນດາຟາມ ຫລື ຄັງລ້ຽງງົວ Ruzi, Guinea , Mulato, and Napier ມີປະມານ **103,443 ຮຕ**

# ສັງລວມພືດຍຸດທະສາດ ສາມາດຜະລິດສິ່ງເສດເຫລືອເປັນອາຫານສັດ,

| ພືດຍຸດທະສາດ | ເນື້ອທີ່ເກັບກ່ຽວ (ຮຕ) | ຜົນຜະລິດ (ໂຕນ) | ສິ່ງເສດເຫລືອ(ໂຕນ) | ໝາຍເຫດ |
|---|---|---|---|---|
| **ເຂົ້ານາ (ນາປີ ແລະ ນາແຊງ )** | 963,754 | 4,055,409 | - ຮຳ: 677,253<br>-ເຂົ້າປຽນ: 79,486<br>- ເຟືອງ: 3,963,086 | ສາມາດເກືອງົວ 2.16 ລ້ານໂຕ |
| **ມັນຕົ້ນ** | 63,260 | 2,083,605 | - ໃບ: 125,016 | ຫົວແລະໃບນຳໃຊ້ໄດ້ 25-55% ສຳລັບເປັນອາຫານເຂັ້ມຂົ້ນ |
| **ສາລີ ແຂງ (ສຳລັບສັດ)** | 176,130 | 955,700 | - ລຳຕົ້ນ: 1,672,415<br>- ແກນ: 836,237 | ເປັນອາຫານພະລັງງານ ພະລັງງານ ແລະ ເຍື່ອໃຍ |
| **ສາລີຫວານ** | 31,060 | 236,825 | - ລຳຕົ້ນ: 414,406<br>- ແກນ: 207,203 | |
| **ອ້ອຍ** | 29,090 | 1,764,390 | - ຍອດ: 863,424<br>- ກາກນ້ຳຕານ: 262,781 | ກາກນ້ຳຕານສາມາດໃຊ້ 10-20% ໃນສູດອາຫານ ແລະ ເຮັດກ້ອນອາຫານເສີມ MUB |
| **ລວມທັງໝົດ** | **1,263,294** | **9,095,929** | **9,101,307** | **ສາມາດເກືອງົວ 4.14 ລ້ານໂຕ** |

## ຈຸດແຂງ

- ຍັງມີເນື້ອທີ່ໃນການລ້ຽງ
- ລ້ຽງງົວ ເພື່ອຮັບໃຊ້ຫລາຍຈຸດປະສົງ
- ສິ່ງເສດເຫລືອທາງດ້ານກະສິກຳມີຫລາຍ
- ມີໜໍ່ແໜງການຜະລິດງົວເພື່ອເປັນສິນຄ້າ

## ກາລະໂອກາດ

- ງົວ ແມ່ນໜຶ່ງໃນ 14 ລາຍການສິນຄ້າກະສິກຳ ສົ່ງອອກ ຂອງລັດຖະບານໄປຍັງ ສປ.ຈີນ
- ມີເສັ້ນທາງລົດໄຟ ລາວ-ຈີນ ເຊື່ອມຈອດ
- ການຕ້ອງການງົວທີ່ມີຄຸນນະພາບ-ປອດໄພ ແມ່ນສ້າງໂອກາດພັດທະນາການລ້ຽງງົວລາວ

## ຂໍ້ຈຳກັດ

- ຊາວກະສິກອນຂາດໂອກາດ ການເຂົ້າເຖິງແຫລ່ງຂໍ້ມູນ
- ບົດຮຽນ ແລະ ແບບແຜນການຄຸ້ມຄອງບໍລິຫານຟາມ, ອາຫານສັດ, ໄລ່ລຽງເສດຖະກິດ ແມ່ນຍັງມີຂໍ້ຈຳກັດ
- ກຸ່ມ, ສະມາຄົມຜູ້ລ້ຽງງົວ ບໍ່ທັນມີກົນໄກ ສຳພັນການຜະລິດທີ່ເປັນຕ່ອງໂສ້ ຮ່ວມກັນ
- ການຮ່ວມມື 4 ປະສານ ຍັງເຮັດບໍ່ໄດ້ດີ.

## ສິ່ງທ້າທາຍ

- ຄວາມສາມາດແຂ່ງຂັນກັບຕະຫລາດພາຍນອກບໍ່ສູງ
- ຂາດທຶນຮອນເພື່ອລົງທຶນ ໃສ່ໂຄງລ່າງ ແລະ ສ້າງກຳລັງການຜະລິດເປັນຂອງຕົນເອງ
- ພະນັກງານສະເພາະດ້ານ ທີ່ມີຄວາມຮູ້-ຄວາມສາມາດຍັງມີໜ້ອຍ